ສະຖາບັນຄົ້ນຄວ້າວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ.

# ບົດລາຍງານ

## ການເຄື່ອນໃຫວວຽກຢູ່ສະໜາມໃນການແນະນຳ ແລະ ນຳພາ ຊາວກະສິກອນ ປູກຜັກລະດູຝົນ ກະລ່ຳປີ ແລະ ໝາກເລັ່ນ ທີ່ ເມືອງເປົ້າໝາຍ (ເມືອງ ຮຸນ, ແຂວງ ອຸດົມໄຊ ແລະ ເມືອງ ຜາອຸດົມ, ແຂວງ ບໍ່ແກ້ວ) ຄັ້ງວັນທີ:04-17/09/2008

ໂດຍ: ສົມໄຊ ວັນຄົງຍະລາດ ແລະ ສຸກສະຫ້ວນ.

ໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າ.

ກັນຍາ, 2008.

**ພາກສະເໜີ:**

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ ຊຶ່ງເປັນໂຄງການໄລຍະສອງທີ່ສະໜັບສະໜູນໂດຍອົງການຊີດາ ສືບຕໍ່ຊ່ວຍເຫຼືອ ສະຖາບັນຄົ້ນຄວ້າ ວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອພັດທະນາ ແລະ ຂະຫຍາຍວຽກງານການຄົ້ນຄວ້າດ້ານກະສິກຳ ແລະ ປ່າໄມ້ ໃນເຂດພູດອຍ ໂດຍມີສ່ວນຮ່ວມຂອງພາກສ່ວນຕ່າງໆ ຈາກທ້ອງຖິ່ນໃນ 4 ແຂວງ, 8 ເມືອງເປົ້າໝາຍຂອງໂຄງການ ລວມທັງເມືອງໂພນໄຊ ແລະ ເມືອງນາໝໍ້ ທີ່ໄດ້ ຈັດຕັ້ງປະຕິບັດໃນໄລຍະທີ່ໜຶ່ງຜ່ານມາ.

ກິດຈະກຳການຄົ້ນຄວ້າທົດລອງກ່ຽວກັບສຶກສາການຄົ້ນຄວ້າເຕັກນິກການປູກຜັກລະດູຝົນຂໍລາຍງານໃຫ້ທ່ານຊາບວ່າ: ກິດຈະກຳດັ່ງກ່າວ ແມ່ນໄດ້ມີການຈັດຕັ້ງປະຕິບັດໄປແລ້ວໃນເບື້ອງຕົ້ນ ຂອງຂອດເຕັກນິກການປູກຜັກລະດູຝົນ ເຊິ່ງໄດ້ ແນະນຳ ແລະ ນຳພາຊາວກະສິກອນ ກ້າເບ້ຍຜັກກະລ່ຳປີ ຢູ່ທີ່ ເມືອງ ຮຸນ, ແຂວງ ອຸດົມໄຊ ແລະ ເມືອງ ຜາອຸດົມ, ແຂວງ ບໍ່ແກ້ວ.

ປະຈຸບັນນີ້ ພາຍຫຼັງສຳເລັດໃນການແນະນຳ ແລະ ນຳພາ ຊາວກະສິກອນ ກ້າເບັ້ຍຜັກກະລ່ຳປີ, ໝາກເລັ່ນ ເຫັນວ່າ: ຊາວກະສິກອນກໍ່ໄດ້ມີການພາກັນຈັດຕັ້ງປະຕິບັດກ້າເບ້ຍຜັກຈົນສຳເລັດ ແລະ ເບັ້ຍຜັກທີ່ກ້າໄປນັ້ນ ໄດ້ມີ ການຈະເລີນເຕີບໂຕ ແລະ ຮອດອາຍຸການຂອງການປູກ, ສະນັ້ນ ເພື່ອໃຫ້ເປັນການທ່ວງທັນຕາມລະດູການ ທີມ ງານທີ່ຮັບຜິດຊອບ ຫົວຂໍ້ການຄົ້ນຄວ້າສຶກສາການປູກຜັກລະດູຝົນ ມີຄວາມຈຳເປັນ ຈະຕ້ອງໄດ້ລົງແນະນຳ ແລະ ນຳພາ ຊາວກະສິກອນ ຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການປູກຜັກ (ຜັກກະລ່ຳປີ, ໝາກເລັ່ນ ແລະ ການບົວລະ ບັດຮັກສາ) ໃນພື້ນ ທີ່ຕົວ ຈິງ ຮ່ວມກັບພະນັກງານປະສານງານເມືອງ ແລະ ຊາວກະສິກອນ.

**1). ຈຸດປະສົງ:**

- ເພື່ອຖ່າຍທອດຄວາມຮູ້ທາງດ້ານເຕັກນິກການປູກຜັກກະລ່ຳປີ, ໝາກເລັ່ນ ແລະ ການບົວລະບັດຮັກສາ
- ເພື່ອແນະນຳ ແລະ ນຳພາຊາວກະສິກອນປູກຜັກກະລ່ຳປີ, ໝາກເລັ່ນ ໃນພື້ນທີ່ຕົວຈິງ

## ❃ ຜົນໄດ້ຮັບ:

## 1. ເມືອງຮຸນ:

ຈາກການເຮັດວຽກຢູ່ພາກສະໜາມກ່ຽວກັບການຄົ້ນຄວ້າການປູກຜັກລະດູຝົນ (ຜັກກະລ່ຳປີ ແລະ ໝາກເລັ່ນ) ເຫັນໄດ້ວ່າ: ຊາວກະສິກອນແມ່ນໃຫ້ຄວາມຮ່ວມໄມ້ຮ່ວມມືເປັນຢ່າງດີດັ່ງມີຜົນໄດ້ຮັບດັ່ງລຸ່ມນີ້:

ໄດ້ແນະນຳ ແລະ ນຳພາຊາວກະກອນຢູ່ພື້ນທີ່ຕົວຈິງກ່ຽວກັບການປູກຜັກລະດູຝົນເຊັ່ນ: ການປູກຜັກກະລ່ຳປີ ແລະ ໝາກເລັ່ນ, ໃນນັ້ນມີຈຳນວນ 4 ຄອບຄົວ:

| ລ/ດ | ຊື່ຂອງຊາວກະສິກອນ | ເນື້ອທີ່ປູກຜັກ | ສະນິດຜັກທີປູກ |
|---|---|---|---|
| 1 | ທ້າວ ອ່ອນສີ | 1ໄລ່ | ກະລ່ຳ,ໝາກເລັ່ນ |
| 2 | ທ້າວ ສີລາ | 1ໄລ່ | ກະລ່ຳ,ໝາກເລັ່ນ |
| 3 | ທ້າວ ພົມ | 1ໄລ່ | ກະລ່ຳ,ໝາກເລັ່ນ |
| 4 | ນາງ ພອນທິບ | 1ໄລ່ | ກະລ່ຳ,ໝາກເລັ່ນ |

1. ວິທີການປູກໝາກເລັ່ນ

1.1. ວິທີການປູກໝາກເລັ່ນໂດຍໃຊ້ຜ້າຢາງຄຸມໜານ:

ແປງໜານຍົກໜານໃຫ້ສູງ 20-30 ຊັງຕີແມັດ ຫຼັງຈາກນັ້ນກໍ່ຮອງພື້ນໜານດ້ວຍປູນຂາວ ແລະ ຝຸ່ນ 15-15-15 ຫ່ວານໃຫ້ທົ່ວທັງໜານ ແລ້ວໃຊ້ຜ້າຢາງຄູມໜານປົກແລ້ວຈິງເຈາະຮູຂຸມປູກ,ຂະໜາດໄລຍະຫ່າງໃນການປູກ 50 x 50 ຊັງຕີແມັດ ກ່ອນປູກຮອງກົ້ນຂຸມດ້ວຍຢາຟູລາດານອັດຕາ 1 ບວງກາເຟ, ຫົດນ້ຳຂຸມໃຫ້ຊຸ່ມ ແລ້ວຈິງເອົາເບ້ຍລົງປູກ ໃຊ້ໄມ້ປັກໄວ້ຂ້າງຕົ້ນໃຊ້ຢາງບ້ວງຍຶດຕົ້ນໝາກເລັ່ນໄວ້ ແລ້ວຈິງຫົດນ້ຳອີກໜຶ່ງຄັ້ງ.

1.2. ວິທີການປູກໝາກເລັ່ນໂດຍບໍ່ໃຊ້ຜ້າຢາງຄູມໜານ:

ແປງໜານຍົກໜານໃຫ້ສູງ 20-30 ຊັງຕີແມັດ ຫຼັງຈາກນັ້ນກໍ່ຮອງພື້ນໜານດ້ວຍປູນຂາວ ແລະ ຝຸ່ນ 15-15-15 ຫ່ວານໃຫ້ທົ່ວທັງໜານ ແລ້ວເຈາະຮູຂຸມປູກ,ຂະໜາດໄລຍະຫ່າງໃນການປູກ 50 x 50 ຊັງຕີແມັດ ກ່ອນປູກຮອງກົ້ນຂຸມດ້ວຍຢາຟູລາດານອັດຕາ 1 ບວງກາເຟ, ຫົດນ້ຳຂຸ່ມໃຫ້ຊຸມແລ້ວຈິງເອົາເບ້ຍລົງປູກ ໃຊ້ໄມ້ປັກໄວ້ຂ້າງຕົ້ນໃຊ້ຢາງບ້ວງຍຶດຕົ້ນໝາກເລັ່ນໄວ້ ແລ້ວຈິງຫົດນ້ຳອີກໜຶ່ງຄັ້ງ

2. ການປູກກະລ່ຳປີ:

2.1 ການປູກກະລ່ຳປີແບບຍົກໜານ:

ແປງໜານຍົກໜານໃຫ້ສູງ 20 – 30 ຊັງຕີແມັດ ໄລຍະຫ່າງໃນການປູກແມ່ນ 40 x 40 ຊັງຕີແມັດ ຮອງພື້ນຂຸມດ້ວຍຢາຟູລາດານ ໃນອັດຕາ 1 ບວງກາເຟ ຄົນໃຫ້ເຂົ້າກັບດິນ ຫົດນ້ຳຂຸມໃຫ້ປຽກ ຈິງເອົາເບ້ຍລົງປູກ ແລ້ວຈິງຫົດນ້ຳຕື່ມອີກ

2.2. ການປູກກະລ່ຳປີແບບບໍ່ຍົກໜານ

ແມ່ນປູກແບບຂຸດຂຸມແລ້ວປູກເລີຍໃຊ້ແຕ່ຢາຟູລາດານກັນປວກ ແລະ ມົດຮອງພື້ນຂຸມ ຈາກນັ້ນກໍ່ຫົດນ້ຳຂຸມແລ້ວເອົາເບ້ຍຜັກລົງປູກຫົດນ້ຳອີກເທື່ອໜຶ່ງໃຫ້ຊຸ່ມດີ.

3. ບັນຫາ ແລະ ຂໍ້ຄົງຄ້າງ

3.1. ດ້ານດີ

- ຊາວກະສິກອນແມ່ນເອົາໃຈໃສ່ໃນການປູກຜັກເປັນຢ່າງດີ ແລະ ເຂົ້າໃຈກ່ຽວກັບຮູບແບບເຕັກນິກຂອງການປູກຜັກ

3.2. ດ້ານອ່ອນ

- ມີບາງຄອບຄົວການກະກຽມພື້ນທີ່ແມ່ນຍັງບໍ່ທ່ວງທັນເຮັດໃຫ້ຫຍຸ້ງຍາກໃນການແປງໜານປູກ

4. ແຜນໃນຕໍ່ໜ້າ

- ຕິດຕາມການປູກຜັກຂອງຊາວກະສິກອນໃນແຕ່ລະຄອບຄົວ

- ຕິດຕາມ ແລະ ແນະນຳໃນການບົວລະບັດຮັກສາ ເຊັ່ນ: ການໃສ່ຝຸ່ນ, ການປ້ອງກັນພະຍາດ ແລະ ແມງໄມ້, ການໃສ່ຄ້າງໝາກເລັ່ນ

ເມືອງຊຸນ, ວັນທີ……………..

ຫົວໜ້າຫ້ອງການປະສານງານໂຄງການ ຜູ້ລາຍງານ

**1. ເນື້ອງພາອຸດົມ:**

ໃນການເຮັດວຽກຢູ່ພາກສະໜາມກ່ຽວກັບການຄົ້ນຄວ້າການປູກຜັກຄຳພືວກລະດູຝົນ (ຜັກກະລໍ່າປີ ແລະ ໝາກເລັ່ນ) ເຫັນໄດ້ວ່າ: ໄດ້ມີການແນະນຳ ແລະ ນຳພາຊາວກະສິກອນປູກຜັກໃນພື້ນທີ່ຕົວຈິງ ແລະ ຊາວກະສິກອນ ກໍ່ມີການຮ່ວມໄມ້ຮ່ວມມືເປັນຢ່າງດີດັ່ງມີຜົນໄດ້ຮັບດັ່ງລຸ່ມນີ້:

ໄດ້ແນະນຳ ແລະ ນຳພາຊາວກະກອນຢູ່ພື້ນທີ່ຕົວຈິງກ່ຽວກັບການປູກຜັກລະດູຝົນເຊັ່ນ: ການປູກຜັກກະລໍ່າປີ ແລະ ໝາກເລັ່ນ, ໃນນັ້ນມີຈຳນວນ 2 ຄອບຄົວ:

| ລ/ດ | ຊື່ຂອງຊາວກະສິກອນ | ເນື້ອທີ່ປູກຜັກ | ສະນິດຜັກທີ່ປູກ |
|---|---|---|---|
| 1 | ທ້າວ ສົມພອນ | 1ໄລ່ | ໝາກເລັ່ນ ແລະ ກະລໍ່າປີ |
| 2 | ນາງ ຄຳພືວ | 1ໄລ່ | ກະລໍ່າ ແລະ ໝາກເລັ່ນ |

ກ່ອນຈະລົງຈັດຕັ້ງປະຕິບັດຕົວຈິງຢູ່ໃນພື້ນທີ່ຂອງຊາວກະສິກອນແມ່ນໄດ້ມີການມອບອຸປະກອນທີ່ໃຊ້ເຂົ້າໃນການປູກຜັກ, ຈາກນັ້ນກໍ່ໄດ້ມີການແນະນຳທາງດ້ານທິດສະດີໂດຍມີພະນັກງານຂອງຫ້ອງການກະສິກຳເຂົ້າຮ່ວມ 4 ຄົນ ແລະ ຊາວກະສິກອນຜູ້ທີ່ເຂົ້າຮ່ວມ 2 ຄົນ ແລະ ບໍ່ເຂົ້າຮ່ວມ 3 ຄົນ ດັ່ງມີລາຍລະອຽດລຸ່ມນີ້:

- ຮູບແບບການທົດລອງ
- ເຕັກນິກການປູກ
- ການບົວລະບັດຮັກສາ
- ການເກັບກ່ຽວ
- ການເກັບກຳຂໍ້ມູນ

**1. ຮູບແບບໃນການຄົ້ນຄວ້າທົດລອງຮ່ວມກັບຊາວກະສິກອນຢູ່ໃນພື້ນທີ່ຕົວຈິງ**

ໃນການຄົ້ນຄວ້າທົດລອງຮ່ວມກັບຊາວກະສິກອນກ່ຽວກັບການປູກຜັກແມ່ນໄດ້ທົດລອງ 2 ແນວພັນຜັກ (ຜັກກະລໍ່າປີ ແລະ ໝາກເລັ່ນ) ຄື:

- ການປູກໝາກເລັ່ນ

  - ທົດລອງການປູກແບບຄຸມໜານ (ໂດຍນຳໃຊ້ຜ້າຢາງດຳ) ປູກ 2 ແນວພັນ: ແນວພັນໝາກເລັ່ນ 382 ແລະ HRC6

  - ທົດລອງການປູກແບບບໍ່ຄຸມໜານ (ໂດຍບໍ່ນຳໃຊ້ຜ້າຢາງດຳ) ປູກ 2 ແນວພັນ: ແນວພັນໝາກເລັ່ນ 382 ແລະ HRC6

- ການປູກຜັກກະລໍ່າປີ

  - ທົດລອງການປູກແບບຍົກໜານປູກ (ນຳໃຊ້ແນວພັນ KY ພຽງຊະນິດດຽວ)
  - ທົດລອງການປູກແບບບໍ່ຍົກໜານປູກ (ນຳໃຊ້ແນວພັນ KY ພຽງຊະນິດດຽວ)

**1.1. ການປູກໝາກເລັ່ນ:**

1.1.1. ວິທີການປູກໝາກເລັ່ນໂດຍໃຊ້ຜ້າຢາງຄຸມໜານ:

ຍົກໜານປູກ ຂະໜາດສູງ 20-30 ຊັງຕີແມັດ, ກວ້າງ 60 ຊັງຕີແມັດ, ຄວາມຍາວແມ່ນອີງຕາມພື້ນທີ່ ຫຼັງຈາກນັ້ນກໍ່ຮອງພື້ນໜານດ້ວຍປູນຂາວ ແລະ ຝຸ່ນ 15-15-15 ຫວ່ານໃຫ້ທົ່ວທັງໜານ ແລ້ວໃຊ້ຜ້າຢາງ

ຄຸມໜານປົກຈາກນັ້ນແລ້ວກໍ່ເຈາະຮູຂຸມປູກ, ການປູກແມ່ນປູກແບບສະຫຼັບ ເຊິ່ງມີຂະໜາດໄລຍະຫ່າງໃນການປູກ 50 x 50 ຊັງຕີແມັດ, ກ່ອນປູກຮອງກົ້ນຂຸມດ້ວຍຢາຝູລາດານອັດຕາ 1 ບວງກາເຟ, ຫົດນ້ຳຂຸມໃຫ້ຊຸ່ມແລ້ວຈຶ່ງເອົາເບ້ຍລົງປູກ ໃຊ້ໄມ້ປັກໄວ້ຂ້າງຕົ້ນໃຊ້ຢາງບ້ວງຍຶດຕົ້ນໝາກເລັ່ນໄວ້ ແລ້ວຈຶ່ງຫົດນ້ຳອີກໜຶ່ງຄັ້ງ.

1.1.2. ວິທີການປູກໝາກເລັ່ນໂດຍບໍ່ໃຊ້ຜ້າຢາງຄູມໜານ:

ຍົກໜານປູກ ຂະໜາດສູງ 20-30 ຊັງຕີແມັດ, ກວ້າງ 60 ຊັງຕີແມັດ, ຄວາມຍາວແມ່ນອີງຕາມພື້ນທີ່ ຫຼັງຈາກນັ້ນກໍ່ຮອງພື້ນໜານດ້ວຍປູນຂາວ ແລະ ຝຸ່ນ 15-15-15 ຫ່ວານໃຫ້ທົ່ວທັງໜານ ແຕ່ບໍ່ໄດ້ໃຊ້ຜ້າຢາງຄຸມໜານ ມີແຕ່ເຈາະຮູຂຸມປູກ, ການປູກແມ່ນປູກແບບສະຫຼັບ ເຊິ່ງມີຂະໜາດໄລຍະຫ່າງໃນການປູກ 50 x 50 ຊັງຕີແມັດ, ກ່ອນປູກຮອງກົ້ນຂຸມດ້ວຍຢາຝູລາດານອັດຕາ 1 ບວງກາເຟ, ຫົດນ້ຳຂຸມໃຫ້ຊຸ່ມແລ້ວຈຶ່ງເອົາເບ້ຍລົງປູກ ໃຊ້ໄມ້ປັກໄວ້ຂ້າງຕົ້ນໃຊ້ຢາງບ້ວງຍຶດຕົ້ນໝາກເລັ່ນໄວ້ ແລ້ວຈຶ່ງຫົດນ້ຳອີກໜຶ່ງຄັ້ງ.

**1.2. ການປູກກະລໍ່າປີ:**

1.2.1 ການປູກກະລໍ່າປີແບບຍົກໜານ:

ແປງໜານຍົກໜານໃຫ້ສູງ 20 – 30 ຊັງຕີແມັດ, ກວ້າງ 80 ຊັງຕີແມັດ ໄລຍະຫ່າງໃນການປູກແມ່ນ 40 x 40 ຊັງຕີແມັດ ປູກເປັນແຖວຄູ່ ຮອງພື້ນຂຸມດ້ວຍຢາຝູລາດານ ໃນອັດຕາ 1 ບວງກາເຟ ຄົນໃຫ້ເຂົ້າກັບດິນ ຫົດນ້ຳຂຸມໃຫ້ຊຸ່ມແລ້ວຈຶ່ງເອົາເບ້ຍລົງປູກ ແລ້ວຈຶ່ງຫົດນ້ຳຕື່ມອີກຄັ້ງ

1.2.2. ການປູກກະລໍ່າປີແບບບໍ່ຍົກໜານ

ແມ່ນປູກແບບຂຸດຂຸມແລ້ວປູກເລີຍໃຊ້ແຕ່ຢາຟູລາດານກັນປວກ ແລະ ມົດຮອງພື້ນຂຸມ ໄລຍະການປູກຕົ້ນ/ຕົ້ນ ແລະ ແຖວ/ແຖວ ແມ່ນ 40 x 40 ຊັງຕີແມັດ ຈາກນັ້ນກໍ່ຫົດນ້ຳຂຸມແລ້ວເອົາເບ້ຍຜັກລົງປູກຫົດນ້ຳອີກເທື່ອໜຶ່ງໃຫ້ຊຸ່ມດີ.

3. ບັນຫາ ແລະ ຂໍ້ຄົງຄ້າງ

3.1. ດ້ານດີ

- ຊາວກະສິກອນແມ່ນເອົາໃຈໃສ່ໃນການປູກຜັກເປັນຢ່າງດີ ແລະ ເຂົ້າໃຈກ່ຽວກັບຮູບແບບເຕັກນິກຂອງການປູກຜັກ

3.2. ດ້ານອ່ອນ

- ການກະກຽມພື້ນທີ່ແມ່ນຍັງບໍ່ທ່ວງທັນເຮັດໃຫ້ຫຍຸ້ງຍາກໃນການແປງໜານປູກ
- ການຂົນຍ້າຍເບ້ຍຜັກໄປປູກແມ່ນຢູ່ໄກພື້ນທີ່

4. ແຜນໃນຕໍ່ໜ້າ

- ຕິດຕາມການປູກຜັກຂອງຊາວກະສິກອນ
- ຕິດຕາມ ແລະ ແນະນຳໃນການບົວລະບັດຮັກສາ ເຊັ່ນ: ການໃຫ້ນ້ຳ, ການໃສ່ຝຸ່ນ, ການປ້ອງກັນພະຍາດ ແລະ ແມງໄມ້, ການໃສ່ຄ້າງໝາກເລັ່ນ

ເມືອງຜາອຸດົມ, ວັນທີ……………..

ຫົວໜ້າຫ້ອງການປະສານງານໂຄງການ ຜູ້ລາຍງານ